


# ຝຶກອົບຮົມການຄຸ້ມຄອງ-
# ບໍລິຫານສາງເກັບມ້ຽນເຄື່ອງບັນເທົາທຸກ

ວັນທີ 19-20 ເດືອນພະຈິກ 2019| ວຽງຈັນ, ລາວ

## ຕິດຕໍ່


| | | |
|---|---|---|
| ພາທຣິເຊຍ ໂຕຣນຮິວ | ຊ່ຽວຊານການກຽມຄວາມພ້ອມ ທາງດ້ານພະລາທິການ | patricia.thornhill@wfp.org |
| ຕູ້ລໍ່ ເຊຍໄມ | ຜູ້ປະສານງານ-ການກຽມຄວາມ ພ້ອມທາງດ້ານພະລາທິການ | toulor.xiamai@wfp.org |

# ພາກສະເໜີ

ຝຶກອົບຮົມການຄຸ້ມຄອງບໍລິຫານສາງແມ່ນໄດ້ມີການດັດແກ້ເນື້ອໃນໃຫ້ແທດເໝາະກັບຄວາມຕ້ອງການ ຂອງລັດຖະບານລາວ ແລະ ຂີດຄວາມສາມາດ. ແບບຟອມ, ບົດບັນທຶກເຄື່ອງທີ່ເປັນໄຟຣອີເລັກໂທນິກ ແລະ ຄູ່ມືສາງ ແມ່ນໄດ້ລວບລວມໂດຍທີມງານໂຄງການ ໂດຍຜ່ານການຮ່ວມມືກັບກະຊວງ ຮສສ, ອີງໃສ່ລະດັບຄວາມຮູ້ ແລະ ຂັ້ນຕອນໃນການອານຸມັດຕ່າງໆ.
ການຝຶກອົບຮົມແມ່ນໄດ້ຈັດຂຶ້ນເປັນເວລາ ສອງວັນ ທີ່ນະຄອນຫຼວງວຽງຈັນ, ໜຶ່ງມື້ເປັນພາກທິດສະດີ ຢູ່ທີ່ໂຮງແຮມຄຣາວພຣາຊາ ແລະ ມື້ໜຶ່ງແມ່ນປະຕິບັດຕົວຈິງ ຢູ່ສາງມ້ຽນເຄື່ອງບັນເທົາທຸກຂອງກະຊວງ ຮສສ. ນຳສະເໜີໂດຍ ທ່ານ ນ. ພາທຣິເຊຍ ໂຕຣນຮິວ, ຜູ້ ຊ່ຽວຊານການກຽມຄວາມພ້ອມທາງດ້ານພະລາທິການ; ທ່ານ ອາລານ ຈອນສັນ, ຜູ້ປະສານງານ/ຄູຝຶກ RedR ອົດສະຕາລີປະຈຳພາກພື້ນອາຊີ ແລະ ປາຊີຟິກ ແລະ ພະນັກງານພະລາທິການຂອງອົງການອາຫານໂລກ.
ຜູ້ເຂົ້າຮ່ວມລວມມີ: 7 ທ່ານຈາກກະຊວງ ຮສສ, 19 ທ່ານ ຈາກຮສສແຂວງ, ແຂວງລະ ໜຶ່ງທ່ານ - ສອງ ທ່ານ ຈາກແຂວງອັດຕະປືເຊິ່ງເປັນແຂວງທີ່ມີສາງຂະໜາດໃຫ່ຍ ແລະ ສອງທ່ານຈາກອົງການກາແດງລາວ
ໃນປະຈຸບັນ, ກະຊວງ ຮສສ ຍັງບໍ່ທັນໄດ້ມີການບັນທຶກເຄື່ອງທີ່ໄດ້ແຈກອອກໄປໃຫ້ກັບຜູ້ໄດ້ຮັບຜົນປະໂຫຍດ, ບໍ່ມີການບັນທຶກເຄື່ອງຢູ່ໃນສາງ. ການຝຶກອົບຮົມໃນຄັ້ງນີ້ເປັນກຽດໂດຍທ່ານທ່ານ ຫົວໜ້າກົມສັງຄົມສົງເຄາະ ຂອງກະຊວງ ຮສສ ແລະ ຜູ້ຕ່າງໜ້າອົງການອາຫານໂລກ, ເປັນຜູ້ເປີດການຝຶກອົບຮົມໃນຄັ້ງນີ້.
ຈຸດປະສົງຂອງການຝຶກອົບຮົມໃນຄັ້ງນີ້ແມ່ນເພື່ອຝຶກໃຫ້ຜູ້ເຂົ້າຮ່ວມ ແລະ ເພື່ອຈັດຕັ້ງປະຕິບັດລະບົບການບໍລິຫານຈັດການສາງແບບໃໝ່ ແລະ ຈັດລຽນກອດນັບເຄື່ອງຕົວຈິງຢູ່ໃນສາງໃຫ້ເປັນໄປຕາມລະບົບ.

## ຄວາມເປັນມາ

ສປປ ລາວ ມີເຫດການນ້ຳຖ້ວມເກີດຂຶ້ນຕິດຕໍ່ກັນໃນປີ 2018 ແລະ 2019. ໃນປີທຳອິດມີປະມານ 5,000 ຄົນ ຖືກຍົກຍ້າຍຫຼັງຈາກເຂື່ອນແຕກ. ໃນປີນີ້ ມີພາຍຸເຂົ້າມາສອງຄັ້ງເຮັດໃຫ້ເກີດນ້ຳຖ້ວມ 6 ແຂວງ ເຊິ່ງມີຜູ້ໄດ້ຮັບຜົນກະທົບຫຼາຍກວ່າ 650,000 ຄົນ ໃນນັ້ນຫຼາຍກວ່າ 100,000 ຄົນ ຈຳເປັນຕ້ອງໄດ້ຍົກຍ້າຍໄປຢູ່ບ່ອນພັກຊົ່ວຄາວ.
ໃນປີ 2018 ລັດຖະບານ ສປປ ລາວ ໄດ້ຮັບການບໍລິຈາກເຄື່ອງຊ່ວຍເຫຼືອເພື່ອບັນເທົາທຸກສຸກເສີນເປັນຈຳນວນຫຼວງຫຼາຍ ແລະ ໄດ້ຕິດຕັ້ງເຕັ້ນສາງຈຳນວນສອງເຕັ້ນເຊິ່ງໄດ້ຮັບການສະໜັບສະໜູນຈາກອົງການອາຫານໂລກ.ໃນປີ2019 ເຂດທີ່ໄດ້ຮັບຜົນກະທົບກອມເອົາຫຼາຍແຂວງ ແລະ ຕ່າງກໍ່ມີຄວາມຈຳເປັນໃນການຕິດຕັ້ງສາງຊົ່ວຄາວເພື່ອເກັບມ້ຽນ ແລະ ແຈກຢາຍ ເຄື່ອງບັນເທົາທຸກ.
ເນື່ອງຈາກວ່າ ທີມງານຮັບຜິດຊອບຂອງລັດລັດຖະບານບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານຄຸ້ມຄອງສາງມາກ່ອນ, ສະນັ້ນ ການເກັບຮັກສາ, ການບັນທຶກ ແລະ

ການແຈກຢາຍເຄື່ອງບັນເທົາທຸກຈຶ່ງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ. ກະຊວງແຮງງານແລະ ສະຫວັດດີການສັງຄົມເຫັນໄດ້ຄວາມສໍາຄັນຂອງວຽກງານການຝຶກອົບຮົມການຄຸ້ມຄອງ-ບໍລິຫານສາງເກັບມ້ຽນເຄື່ອງບັນເທົາທຸກສຸກເສີນ ແລະ ໄດ້ລະບຸຄວາມຕ້ອງການ ເພື່ອສະເຫນີຂໍຄວາມໃຫ້ໂຄງການກຽມພ້ອມດ້ານພະລາທິການໃຫ້:

- ຊ່ວຍໃນການຝຶກອົບຮົມແກ່ຜູ້ຮັບຜິດຊອບທັງຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ກ່ຽວກັບການຄຸ້ມຄອງບໍລິຫານສາງ
- ຊ່ວຍສ້າງລະບົບສາງເກັບມ້ຽນເຄື່ອງຊົ່ວຄາວຢູ່ນະຄອນຫຼວງວຽງຈັນ
- ຊ່ວຍສ້າງລະບົບການບໍລິຫານ-ຈັດການເຄື່ອງໃນສາງ
- ສະຫັບສະໜູນກຳນົດຈຸດເກັບຮັກສາເຕັ້ນສາງ ແລະ ການຝຶກອົບຮົມການຕັ້ງເຕັ້ນສາງ ຢູ່ໃນຂອບເຂດທົ່ວປະເທດ

ການຝຶກອົບຮົມການບໍລິຫານຄຸ້ມຄອງສາງ
ຈະເປັນການເພີ່ມທະວີຄວາມອາດສາມາດໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນການກະກຽມ, ການຮັບ, ຄຸ້ມຄອງ ແລະ ແຈກຢາຍເຄື່ອງບັນເທົາທຸກສຸກເສີນໃນໄລຍະເກີດໄພພິບັດ.

### ຈຸດປະສົງ

1) ເພື່ອຝຶກອົບຮົມໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໃນການສ້າງ ແລະ ຄຸ້ມຄອງລະບົບສາງທັງແບບສາງຊົ່ວຄາວ ແລະ ສາງຖາວອນ ສໍາລັບເກັບມ້ຽນເຄື່ອງຊ່ວຍເຫຼືອບັນເທົາທຸກ
2) ສະໜອງແບບຟອມ ແລະ ຂັ້ນຕອນແບບງ່າຍດາຍສໍາລັບການບໍລິຫານຈັດການ ແລະ ການບັນທຶກລາຍການເຄື່ອງບັນເທົາທຸກ

# ໂຄງສ້າງການຝຶກອົບຮົມ

### ການຝຶກໃນຫ້ອງຮຽນ

ການຝຶກອົບຮົມໃນຫ້ອງຮຽນແມ່ນໄດ້ນໍາໃຊ້ຮູບແບບການນໍາສະເໜີ ພາວເວີດພອຍ, ຕົວຢ່າງ ແລະ ເຮັດວຽກເປັນກຸ່ມ ຕາມຫົວຂໍ້ລຸ່ມນີ້:

- ທີ່ຕັ້ງຂອງສາງ ແລະ ການດູແລຮັກສາສາງ;
- ການເກັບຮັກສາ ແລະ ຕົວຢ່າງການຄິດໄລ່ການຂົນສົ່ງເພື່ອກໍານົດພື້ນທີ່ແລະການບັນທຶກ / ການເກັບຮັກສາເຄື່ອງທີ່ມາກັບຕູ້ຄອນເທນເນີແມ່ນຕ້ອງການພື້ນທີ່ຕ່າງກັນຕາມປະເພດເຄື່ອງ ແລະ ແນະນໍາການໃຊ້ແບບຟອມຕິດຕາມ.

### ການລົງປະຕິບັດຕົວຈິງຢູ່ສາງ

ຜູ້ເຂົ້າຮ່ວມໄດ້ນໍາໃຊ້ທິດສະດີທີ່ໄດ້ອະທິບາຍຢູ່ໃນຫ້ອງຮຽນເອົາໄປນໍາໃຊ້ຕົວຈິງໃນການທົດສອບຢູ່ສາງເພື່ອທົດລອງ ແລະ ສ້າງຄວາມເຂັ້ມແຂງໃນການຮຽນຮູ້. ຖືກຈັດຕັ້ງປະຕິບັດຈາກການປະເມີນຜົນໂດຍເປັນກຸ່ມ, ເຮັດຕົວຢ່າງຈິງ ແລະ ການຈັດວາງເວລາຈິງ, ກວດນັບເຄື່ອງຕົວຈິງ ດ້ວຍການນໍາ ໃຊ້ແບບຟອມບັນທຶກຈິງ ແລະ ບັນທຶກເຂົ້າໃນລະບົບຈິງ.

## ບົດຮຽນ ແລະ ຜົນໄດ້ຮັບ

1. ເລືອກສາງທີ່ເໝາະສົມ
2. ພະນັກງານ ແລະ ອຸປະກອນ
3. ຂະໜາດຂອງສາງ
4. ການຄິດໄລ່ທີ່ຈໍາເປັນ
5. ການປະຕິບັດງານຢູ່ສາງ
6. ການບໍລິຫານ ແລະ ຄຸ້ມຄອງເຄື່ອງ
7. ບັນຫາ ແລະ ສະຖານະການທີ່ຍົກມາສົນທະນາ ແມ່ນໄດ້ອີງໃສ່ສະພາບນໍ້າຖ້ວມໃນປະຈຸບັນ

### ບົດຮຽນ 1 ແລະ 2

- ຜູ້ເຂົ້າຮ່ວມສ່ວນຫຼາຍໄດ້ເຂົ້າຮ່ວມການຝຶກອົບຮົມການຕັ້ງເຕັ້ນເຄື່ອນທີ່ ເຊິ່ງປະກອບມີການຕິດຕັ້ງສາງ. ຄູຝຶກ ໄດ້ສັງເກດເຫັນວ່າບັນດາກຸ່ມໄດ້ເຂົ້າໃຈຕໍ່ອົງປະກອບຫຼັກໃນການເລືອກສາງ, ທີ່ຕັ້ງ, ພະນັກງານ ແລະ ອຸປະກອນຕ່າງໆ. ສໍາ ລັບກຸ່ມທີ່ບໍ່ໄດ້ຜ່ານການຝຶກອົບຮົມບໍລິຫານສາງມາກ່ອນຖືວ່າພວກເຂົາແມ່ນມີຄວາມເຂົ້າໃຈດີຫຼາຍ. ນີ້ເປັນການບົ່ງບອກໄດ້ວ່າຄວາມຮູ້ທີ່ໄດ້ຈາກການຝຶກອົບຮົມການຕັ້ງເຕັ້ນເຄື່ອນທີ່ຂອງຜູ້ເຂົ້າຮ່ວມແມ່ນຍັງຈື້ຈໍາໄດ້ດີຊຶ່ງຖືວ່າເປັນທ່າອ່ຽງທີ່ດີສໍາລັບຄວາມຍືນຍົງໃນອານະຄົດ.

### ບົດຮຽນ 3 ແລະ 4

ໃນພາກຂອງການຄິດໄລ່ຖືວ່າເປັນສິ່ງໃໝ່ສໍາລັບພະນັກງານ ແຕ່ເຖິງຢ່າງໃດກໍ່ຕາມໃນການເຮັດວຽກເປັນກຸ່ມນັ້ນພວກເຂົາສາມາດຄິດໄລ່ໄດ້ດີຕໍ່ ຂະໜາດໃນການບັນຈຸຂອງສາງ ແລະ ນໍ້າໜັກ ແລະ ທຸກຄົນສາມາດຕອບໄດ້ຢ່າງຖືກຕ້ອງ. ການເຮັດຕົວຈິງຫຼາຍຂື້ນຈະເຮັດໃຫ້ພວກເຂົາສາມາດຈື່ຈໍາບົດຮຽນໄດ້ດີຂຶ້ນ. ຄູ່ມືແນະນໍາ ແລະ ອຸປະກອນຕ່າງໆແມ່ນໄດ້ປະກອບໃຫ້.

**ບົດຮຽນ 5 ແລະ 7**

- ສະພາບຂອງສາງ ແລະ ສະພາບຕົວຢ່າງໄພນ້ຳຖ້ວມໃນປະຈຸບັນເປັນເຫດການທີ່ສຳຄັນສຳລັບການຈັດຝຶກອົບຮົມ ເຊັ່ນ: ການກອງເຄື່ອງ ແລະ ການຈັດວາງພື້ນທີ່. ການທີ່ໄດ້ເບິ່ງຕົວຢ່າງໃນການເກັບຮັກສາເຄື່ອງ ແລະ ຂັ້ນຕອນໃນການບັນທຶກຕ່າງໆຢູ່ສາງຂອງອົງການອາຫານໂລກນັ້ນແມ່ນເປັນບົດຮຽນທີ່ດີແກ່ພວກເຂົາ. ຜູ້ເຂົ້າຮ່ວມໄດ້ມີການປັບປຸງ ແລະ ຈັດລຽນເພື່ອແຍກເຄື່ອງປະເພດຕ່າງໆຢູ່ສາງກະຊວງ ຮສສ.
- ຕົວຢ່າງເຫຼົ່ານີ້ເປັນການບົ່ງບອກເຖິງຄວາມຫຍຸ້ງຍາກໃນກໍລະນີທີ່ຮັບເຄື່ອງບໍລິຈາກເຂົ້າສາງໃຫຍ່ໂດຍກົງໂດຍປາສະຈາກການແຈກແຍກ ແລະ ຫຸ້ມຫໍ່ຄືນກ່ອນ.
- ຄຳແນະນຳສຳລັບການບໍລິຫານຈັດການເຄື່ອງບໍລິຈາກໃຫ້ໄດ້ທັງສອງຢ່າງເຊັ່ນ: ມີການແຈກແຍກ ແລະ ການຫຸ້ມຫໍ່ຄືນແລ້ວ ແລະ ບັນຊີລາຍການກິດຈະກຳ ການກະກຽມຄວາມພ້ອມ ທີ່ສາມາດຫຼຸດຜ່ອນການບໍລິຈາກເຄື່ອງ ທີ່ບໍ່ຕ້ອງການ ຫຼື ເຄື່ອງບໍລິຈາກທີ່ປົນແປກັນ. ສິ່ງນີ້ໄດ້ເພີ່ມເຂົ້າໃນແຜນປະຕິບັດງານຂອງໂຄງການກຽມຄວາມພ້ອມດ້ານພະລາທິການ ເປັນແຜນບຸລິມະສິດທຳອິດ.

**ບົດຮຽນ 6**

ຜູ້ເຂົ້າຮ່ວມຍັງບໍ່ມີຄວາມຮູ້ດີເທົ່າທີ່ຄວນກ່ຽວກັບການບໍລິຫານສາງ ແລະ ການນຳໃຊ້ແບບຟອມຕ່າງໆ. ສະນັ້ນບົດຮຽນຕ່າງໆຈຶ່ງໄດ້ນຳສະເໜີຢູ່ຫ້ອງຮຽນ ແລະ ຢູ່ສາງເພື່ອໃຫ້ພວກເຂົາໄດ້ຈົດບັນທຶກຫຼືເຮັດຕົວຢ່າງຕົວຈິງ. ມີຄຳແນະນຳໃຫ້ແກ້ໄຂແບບຟອມໃຫ້ງ່າຍ ແລະ ຈະແຈ້ງຂຶ້ນຕື່ມເພື່ອໃຫ້ຮັບຮູ້ໄດ້ເຖິງລາຍການຕ່າງໆຂອງເຄື່ອງ ແລະ ນ້ຳໜັກ. ມອບໃຫ້ກະຊວງ ຮສສ ເປັນຜູ້ດັດແກ້ ແລະສັງລວມແບບຟອມ ໃຫ້ໄດ້ແບບທີ່ສົມບູນ, ຈະພິມໃບນຳສົ່ງເຄື່ອງ ແລະ ໃບຮັບເຄື່ອງໃຫ້ເປັນກາບອນໃນໂຕ.

ໂຄງຮ່າງຂັ້ນຕອນມາດຕະຖານການຈັດຕັ້ງປະຕິບັດການນຳໃຊ້ແບບຟອມໃນແຕ່ລະຂັ້ນຕອນນັ້ນ ໄດ້ແນະນຳລະອຽດວ່າແບບຟອມໃດຄວນໃຊ້ເວລາໃດ ແລະແນະນຳໃຫ້ພິມເປັນເຈ້ຍສີແຜ່ນໃຫຍ່ພ້ອມດ້ວຍອັດແຂງ ແລະ ຕິດຢູ່ທຸກໆສາງ. ຮຽກຮ້ອງໃຫ້ມີການຝຶກອົບຮົມຕື່ມອີກໃນການນຳໃຊ້ແບບຟອມຕ່າງໆສຳລັບການຮັບ ແລະ ຂົນສົ່ງເຄື່ອງບັນເທົາທຸກ, ໂດຍສະເພາະແມ່ນມີຊອງຫວ່າງໃນການຮັບເຄື່ອງ ແລະ ຂົນສົ່ງເຄື່ອງຢູ່ຂັ້ນແຂວງ.

ຜູ້ເຂົ້າຮ່ວມສາມາດແຍກປະເພດເຄື່ອງໄດ້, ນັບໄດ້, ກອງໄດ້, ບັນທຶກຂໍ້ມູນໃນແບບຟອມບັດກອງເຄື່ອງໄດ້ ແລະ ສາມາດບັນທຶກເຂົ້າບັດບັນທຶກເຄື່ອງໄດ້ໂດຍຖືກຕ້ອງຕາມຈຸດປະສົງ ແລະ ເຂົ້າໃຈຄວາມສຳຄັນຂອງແບບຟອມນີ້.










ການຈັດຕັ້ງປະຕິບັດຢູ່ໃນສາງແມ່ນໄດ້ມີການບັນ
ທຶກເຂົ້າໃນປຶດບັນທຶກ, ເຖິງຢ່າງໃດກໍ່ຕາມຍັງມີບັດກອງເຄື່ອງຈຳນວນໜຶ່ງທີ່ຍັງບໍ່ທັນໄດ້ຈົດບັນທຶກເທື່ອຍ້ອນໝົດເວລາ. ໂຄງການຈະສືບຕໍ່ຕິດຕາມກັບນາຍສາງເພື່ອໃຫ້ແນ່ໃຈວ່າເອກະສານຕ່າງໆໄດ້ມີການບັນທຶກ ແລະ ມີການປັບປຸງໃຫ້ເປັນໄປຕາມການຝຶກ. ມີເອກະສານເປັນຕົວປະກອບໃນການຮຽນຮູ້.

ຕ້ອງການໃຫ້ມີຫ້ອງການຢູ່ໃນສາງເພື່ອຊ່ວຍໃນການບັນທຶກ ແລະ ຈັດວາງກອງເຄື່ອງ. ອົງການອາຫານໂລກກຳລັງໃຫ້ການຊ່ວຍເຫຼືອໃນການປັບປຸງສາງ ເພື່ອໃຫ້ເປັນສູນກາງສຳລັບເຄື່ອງບັນເທົາທຸກດ້ານມະນຸດສະທຳ.

# ຂັ້ນຕອນຕໍ່ໄປ

- ກະຊວງ ຮສສ ຈະເປັນຜູ້ບັນທຶກຂໍ້ມູນເຂົ້າໃນແບບຟອມຕ່າງໆ ແລະ ໜ່ວຍງານພະລະທິການຈະເປັນຜູ້ພິມໃບນຳສົ່ງເຄື່ອງ ແລະ ໃບຮັບເຄື່ອງ. ແບບຟອມທັງໝົດນີ້ແມ່ນໄດ້ມອບໃຫ້ກະຊວງ ຮສສ ເປັນຜູ້ຈັດຕັ້ງປະຕິບັດ ແລະ ຕິດຕາມກິດຈະກຳການບໍລິຫານສາງ
- ພະນັກງານວິຊາການດ້ານການກຽມຄວາມພ້ອມຈະເປັນຜູ້ຕິດຕາມກັບນາຍສາງຂອງກະຊວງ ຮສສ ເພື່ອໃຫ້ແນ່ໃຈວ່າແບບຟອມການບັນທຶກຕ່າງໆໄດ້ຖືກນຳໃຊ້ຕາມຈຳນວນເຄື່ອງທີ່ມີຢູ່, ເພື່ອໃຫ້ພະນັກງານຮັບຮູ້ຂັ້ນຕອນ ແລະ ມີຄວາມຮູ້ພຽງພໍທີ່ສາມາດສືບຕໍ່ໄດ້.
- ຢາກໃຫ້ມີພະນັກງານພະລາທິການເຕັມເວລາປະຈຳຢູ່ສາງຂອງກະຊວງ ຮສສ ເພື່ອໃຫ້ສາມາດບໍລິຫານສາງໄດ້, ໃຫ້ມີການຮັກສາ/ມີຄວາມຍືນຍົງທຸກວຽກງານການຝຶກອົບຮົມການກຽມຄວາມພ້ອມດ້ານພະລາທິການ, ມີຄູ່ມືແນະນຳຂັ້ນຕອນການຈັດຕັ້ງປະຕິບັດ ແລະ ເອກະສານຕ່າງໆ, ແລະ ຊ່ວຍຈັດການຝຶກອົບຮົມຢູ່ຂັ້ນທ້ອງຖິ່ນໃຫ້.
- ໃຫ້ຈັດຕັ້ງປະຕິບັດການຝຶກອົບຮົມການຄຸ້ມຄອງບໍລິຫານສາງຢູ່ເຂດພາກເໜືອ, ພາກກາງ ແລະ ພາກໃຕ້ ຄືກັນກັບການຝຶກອົບຮົມການຕັ້ງເຕັ້ນສາງ, ເພື່ອຝຶກອົບຮົມໃຫ້ແກ່ພະນັກງານຂັ້ນເມືອງ ແລະ ເພີ່ມຂີດຄວາມສາມາດໃນການຮຽນຮູ້ໃຫ້ແກ່ພະນັກງານຂັ້ນແຂວງແລະກະຊວງ

# ການປະເມີນຜົນ

ຄວາມຄາດຫວັງແມ່ນອີງໃສ່ຜູ້ເຂົ້າຮ່ວມໂດຍອີງຕາມຜົນໄດ້ຮັບໃນການຝຶກອົບຮົມການຄຸ້ມຄອງບໍລິຫານສາງ ແລະ ອີງໃສ່ ການເກັບກຳຂໍ້ມູນຕົວຈິງ ວ່າການຝຶກອົບຮົມແມ່ນໄດ້ຕາມຈຸດປະສົງຂອງພວກເຂົາ. ຄວາມຄາດຫວັງແມ່ນໄດ້ປະເມີນໃນມື້ສຸດທ້າຍຂອງການຝຶກອົບຮົມເພື່ອຕອບໂຈດຂອງການຝຶກອົບຮົມວ່າໄດ້ປະສົບຜົນສຳເລັດຕາມທີ່ຜູ້ເຂົ້າຮ່ວມຕ້ອງການ.

## ຄວາມຄາດຫວັງຂອງຜູ້ເຂົ້າຮ່ວມ ແລະ ຜົນໄດ້ຮັບ:

1. ຮຽນຮູ້ວິທີການຄຸ້ມຄອງບໍລິຫານສາງ - ໄດ້ຕາມຈຸດປະສົງ
2. ຮຽນຮູ້ວິທີການຮັບເຄື່ອງ, ການດູແລຮັກສາ, ການເອົາເຄື່ອງອອກ - ໄດ້ຕາມຈຸດປະສົງ
3. ຮຽນຮູ້ລະບົບການບໍລິຫານສາງ - ໄດ້ຕາມຈຸດປະສົງ

4. ຂັ້ນຕອນການບໍລິຫານສາງສໍາລັບການຕອບໂຕ້ໄພພິບັດ - ໄດ້ຕາມຈຸດປະສົງ
5. ແລກປ່ຽນບົດຮຽນການບໍລິຫານສາງກັບຜູ້ຊ່ຽວຊານ ແລະ ພະນັກງານທ້ອງຖິ່ນ - ໄດ້ຕາມຈຸດປະສົງ
6. ຕ້ອງການຮຽນຮູ້ການບໍລິຫານສາງແບບມາດຕະຖານຕ່າງປະເທດ – ໄດ້ຕາມຈຸດປະສົງ
7. ຝຶກອົບຮົມໃຫ້ຂັ້ນເມືອງ ແລະ ຊຸມຊົນ – ບໍ່ໄດ້ຕາມຈຸດປະສົງ, ແຕ່ຈະປະຕິບັດໃນຂັ້ນຕໍ່ໄປ.

# ເອກະສານຊ້ອນທ້າຍ 1 - ລາຍຊື່ຜູ້ເຂົ້າຮ່ວມ

| | Name | Organisation |
|---|---|---|
| 1 | ທ. ພັດພູຊໍາ ຫຼວງອຸທຸມທອງ | ກະຊວງ ຮສສ |
| 2 | ທ. ສະຖາພອນ ອ້ວນດາລາ | ກະຊວງ ຮສສ |
| 3 | ທ. ພອນທະວີ ທໍາມະວົງສ | ກະຊວງ ຮສສ |
| 4 | ນ. ວິໄລຄອນ ແກ້ວບູນທັນ | ກະຊວງ ຮສສ |
| 5 | ທ. ສັກດາ ບົວຄໍາສິດ | ກະຊວງ ຮສສ |
| 6 | ນ. ແຜນຕາ ດວງມະນີ | ກະຊວງ ຮສສ |
| 7 | ທ. ເດດມີໄຊ ວັນນະຈິດ | ພະແນກ ຮສສ ນະຄອນຫຼວງ |
| 8 | ນ. ປາຕີ ຢ່າງ | ກະຊວງ ຮສສ |
| 9 | ທ. ສຸກສະຫັວນ ຈັນທະວົງ | ອົງການກາແດງລາວ |
| 10 | ນ. ສາລິຕ້າ ວົງຈັນດີ | ອົງການກາແດງລາວ |
| 11 | ທ. ເຕັ່ງຊົ່ງ ຊືນູ | ພະແນກ ຮສສ Luangprabang |
| 12 | ທ. ສີທອນ ພິລາຈັນ | ພະແນກ ຮສສ Sayyabouly |
| 13 | ທ. ບຸນຖອງ ພິມມະຈັກ | ພະແນກ ຮສສ Vientiane |
| 14 | ທ. ບຸນທອງ ອ່ອນພະຈັນ | ພະແນກ ຮສສ Phongsaly |
| 15 | ທ. ວັດຕະນະ ຜາສຸກ | ພະແນກ ຮສສ Bolikhamxay |
| 16 | ທ. ສີຖັນ ເຮືອງໄຊຍະນາງ | ພະແນກ ຮສສ Attapeu |
| 17 | ທ. ບຸນພະນົມວັນ ມາລາທອງ | ພະແນກ ຮສສ Saravanh |
| 18 | ທ. ສຸກສັນ | ພະແນກ ຮສສ Sekong |
| 19 | ນ. ຄໍາສະເຫືອນ ແກ້ວຄູນ | ພະແນກ ຮສສ Savanhnakhet |
| 20 | ທ. ຊົວລໍ່ ເຢຍຈູ | ພະແນກ ຮສສ Saysomboun |
| 21 | ທ. ຈຸ່ນພິລາບ | ພະແນກ ຮສສ Attapeu |
| 22 | ທ. ບຸນເພັງ ອ່ອນພະຈັນ | ພະແນກ ຮສສ Oudomxay |
| 23 | ທ. ສຸກສະຫັວນ ຫຼວງຍີ່ກໍາມະທາ | ພະແນກ ຮສສ Houaphanh |
| 24 | ທ. ຊະນະພົນ ຄໍາຕິພົງ | ພະແນກ ຮສສ Khammouane |
| 25 | ທ. ສາຍທະລາ ບໍ່ຄໍາບານ | ພະແນກ ຮສສ Xiengkhouang |
| 26 | ທ. ຍອດຊາຍ ອານອາສາ | ພະແນກ ຮສສ Champasack |
| 27 | ທ. ສຸນາລິນ ຈິດດາລາ | ພະແນກ ຮສສ Luangnamtha |
| 28 | ທ. ບຸນມີແກ້ວມະນີຈັນ | ພະແນກ ຮສສ Borkeo |